Completing Absentee Notes and Notices

# ການຂຽນຕື່ມ ຈົດໝາຍ ແລະ ໜັງສືແຈ້ງ ຜູ້ຂາດໂຮງຮຽນ

ຂໍ້ມູນສຳລັບບັນດາພໍ່ແມ່ ແລະ ຜູ້ປົກຄອງ

## ມັນເປັນສິ່ງສຳຄັນທີ່ຕ້ອງແຈ້ງໃຫ້ທາງໂຮງຮຽນຊາບຖ້າວ່າລູກທ່ານຈະຂາດໂຮງຮຽນ ແລະ ຕ້ອງໃຫ້ເຫດຜົນຂອງການຂາດນີ້ດ້ວຍ.

ຕາມກົດໝາຍແລ້ວ ບັນດາທ່ານຄູໃຫຍ່ເປັນຜູ້ຮັບຜິດຊອບໃນການເກັບ ບັນທຶກການມາໂຮງຮຽນຂອງນັກຮຽນໃຫ້ຖືກຕ້ອງ.

ນອກຈາກນີ້ແລ້ວ ບັນດາທ່ານຄູໃຫຍ່ຍັງເປັນຜູ້ຮັບຜິດຊອບໃນການຕັດສິນໃຈວ່າເຫດຜົນຂອງການຂາດໂຮງຮຽນທີ່ໃຫ້ນັ້ນຖືກຕ້ອງເໝາະສົມຫຼືບໍ່.

ເມື່ອໃດກໍຕາມ ຖ້າເປັນໄປໄດ້, ບັນດາພໍ່ແມ່ແລະຜູ້ປົກຄອງຖືກຂໍຮ້ອງໃຫ້ມີຄຳອະທິບາຍສຳລັບການຂາດໂຮງຮຽນກ່ອນທີ່ການຂາດໂຮງຮຽນຈະມີຂຶ້ນ.

ທ່ານຄູໃຫຍ່ຂອງໂຮງຮຽນມີສິດທີ່ຈະສອບຖາມຄຳຮ້ອງຂໍຂອງພໍ່ແມ່ທີ່ຂໍໃຫ້ລູກຂອງຕົນຂາດໂຮງຮຽນ. ນອກຈາກນີ້ ທ່ານຄູໃຫຍ່ຍັງມີສິດທີ່ຈະສອບຖາມຄຳອະທິບາຍກ່ຽວກັບການຂາດໂຮງຮຽນຂອງເດັກທີ່ທາງພໍ່ແມ່ໄດ້ເອົາໃຫ້.

ເພື່ອອະທິບາຍການຂາດໂຮງຮຽນ ບັນດາພໍ່ແມ່ແລະຜູ້ປົກຄອງສາມາດ:

- ສົ່ງຈົດໝາຍສັ້ງ , ແຟັກຊ໌ ຫຼື ອີເມລ໌ ໄປຫາໂຮງຮຽ
- ໂທຣະສັບຫາໂຮງຮຽ ຫຼື
- ໄປຢ້ຽມໂຮງຮຽ

### ຈົດໝາຍຜູ້ຂາດໂຮງຮຽນເປັນສອງພາສາ

ຈົດໝາຍຜູ້ຂາດໂຮງຮຽນ ເປັນສອງພາສາສາມສະບັບຈະມີໄວ້ໃຫ້ເພື່ອຊ່ວຍທ່ານໃນການແຈ້ງໃຫ້ທາງໂຮງຮຽນຊາບເຖິງການຂາດໂຮງຮຽນຂອງລູກທ່ານ.

Absentee note 1 (ຈົດໝາຍຜູ້ຂາດໂຮງຮຽນ 1) ຄວນໃຊ້ຈົດໝາຍນີ້ໃນເວລາທີ່ເດັກຂາດໂຮງຮຽນເຕັມນຶ່ງມື້.

Absentee note 2 (ຈົດໝາຍຜູ້ຂາດໂຮງຮຽນ 2) ຄວນໃຊ້ຈົດໝາຍນີ້ໃນເວລາທີ່ເດັກຂາດໂຮງຮຽນຫຼາຍກວ່ານຶ່ງມື້

Absentee note 3 (ຈົດໝາຍຜູ້ຂາດໂຮງຮຽນ 3) ຄວນໃຊ້ຈົດໝາຍນີ້ໃນເວລາທີ່ເດັກຂາດໂຮງຮຽນບາງສ່ວນຂອງມື້.

### ໜັງສືແຈ້ງຜູ້ຂາດໂຮງຮຽນ

ຖ້າທາງໂຮງຮຽນບໍ່ໄດ້ຮັບຄຳອະທິບາຍເລື້ອງການຂາດໂຮງຮຽນຂອງເດັກ ທາງໂຮງຮຽນກໍຈະສົ່ງ Absentee note (ໜັງສືແຈ້ງຜູ້ຂາດໂຮງຮຽນ) ໄປຫາທ່ານ.

ບັນດາທ່ານຄູໃຫຍ່ໃຊ້ Absentee note ເພື່ອຕິດຕໍ່ພໍ່ແມ່ພາຍໃນເວລາສອງມື້ທີ່ບໍ່ມີຄຳອະທິບາຍເລື້ອງການຂາດໂຮງຮຽນ. ຕ້ອງຂຽນ ຕື່ມ Absentee note ເປັນພາສາອັງກິດ ແລ້ວສົ່ງກັບຄືນໄປໃຫ້ ໂຮງຮຽນພາຍໃນເວລາເຈັດມື້ຂອງມື້ເຂົ້າໂຮງຮຽນ ພ້ອມທັງໃຫ້ເຫດຜົນຂອງການຂາດໂຮງຮຽນນຳ.

### ຂຽນຕື່ມລາຍລະອຽດຂອງການຂາດໂຮງຮຽນ

ພາກຕ່າງໆຂອງ Absentee Notes ແລະ Absentee Notice ຂໍໃຫ້ທ່ານບອກລາຍລະອຽດຂອງການຂາດໂຮງຮຽນເຕັມ ຫຼື ຂາດໂຮງຮຽນເປັນບາງສ່ວນຂອງລູກທ່ານ.

ເພື່ອໃຫ້ທາງໂຮງຮຽນເຂົ້າໃຈເຫດຜົນທີ່ທ່ານເອົາໃຫ້, ພາກຕ່າງໆເຫຼົ່ານີ້ຕ້ອງຖືກຂຽນຕື່ມເປັນພາສາອັງກິດ. ບັນດາເຫດຜົນທີ່ພໍເປັນໄປໄດ້ກໍໄດ້ມີໄວ້ໃຫ້ຢູ່ໃນໃບປິວນີ້ແລະໄດ້ຖືກແປເປັນພາສາອັງກິດເພື່ອທ່ານຈະໄດ້ຂຽນລອກແບບໃສ່ໃນຟອມ, ຖ້າວ່າມີ.

ຖ້າທ່ານມີບັນຫາໃນການເຂົ້າໃຈ Absentee Notes ແລະ Absentee Notice ຫຼື ໃນການຕື່ມລາຍລະອຽດຕ່າງໆ ທ່ານສາມາດໂທຣະສັບຫາໂຮງຮຽນເພື່ອອະທິບາຍເຖິງເຫດຜົນຂອງການຂາດໂຮງຮຽນຂອງລູກທ່ານ. ຖ້າທ່ານໂທຣະສັບຫາທາງໂຮງຮຽນ ທ່ານກໍບໍ່ຕ້ອງຂຽນຕື່ມໜັງສືເຫຼົ່ານີ້.

### ບໍຣິການ ນາຍພາສາທາງໂທຣະສັບ

ຖ້າທ່ານຕ້ອງການນາຍພາສາເພື່ອຊ່ວຍທ່ານໃນການຕິດຕໍ່ໂຮງ ຮຽນຂອງລູກທ່ານ ກະຣຸນາໂທຣະສັບຫາ ບໍຣິການ ນາຍພາສາທາງໂທຣະສັບຕາມໝາຍເລກ 131 450 ແລະ ຂໍເອົານາຍພາສາລາວ. ນາຍພາສາຈະໂທຫາໂຮງຮຽນ ແລະ ຈະຢູ່ກັບສາຍນັ້ນເພື່ອຊ່ວຍໃນການໂອ້ລົມຂອງທ່ານ. ທ່ານບໍ່ຕ້ອງເສັຍຄ່າບໍຣິການນີ້.

All content copyright
NSW Department of Education

## ເຫດຜົນຕ່າງໆຂອງການຂາດໂຮງຮຽນທີ່ພໍເປັນໄປໄດ້

### ເຫດຜົນທາງການແພດ:

ໄຂ້ຫວັດໃຫຍ່

ເຈັບທ້ອງ

ອາການຖອກທ້ອງ

ໄຂ້ຫວັດ

ເຈັບຫົວ/ເຈັບຫົວຂ້າງດຽວ

ອາການເຈັບປວດແຮງ

ເປັນໄຂ້

ກະດູກຫັກ

ຮາກ

ອາການໄຂ້ທີ່ຕິດແປດ ເຊັ່ນ ໂຣກໝາກສຸກ

ເລືອດດັງອອກ

ເປັນຫືດ

ເປັນຜື່ນ

ບາດເຈັບ

ມີນັດໄປຫາໝໍ

ມີນັດໄປປົວແຂ້ວ

ມີນັດໄປແທກສາຍຕາ

ມີນັດເຮັດກາຍພາບບຳບັດ

ມີນັດໄປຫາແພດຊ່ຽວຊານສະເພາະ

ຢ່າງອື່ນ - ຂ້າພະເຈົ້າຈະໂທຣະສັບຫາໂຮງຮຽນເພື່ອອະທິບາຍ

### ເຫດຜົນທາງຄອບຄົວ:

ການສົ່ງສະການ

ການຍ້າຍເຮືອນ

ການມາຮອດ ຫຼື ການກັບໄປຕ່າງປະເທດຂອງຍາດພີ່ນ້ອງທີ່ໃກ້ຊິດ

ການພົວພັນກັບເຫດການອັນຮ້າຍແຮງໃນຄອບຄົວທີ່ຫຼີກລ່ຽງບໍ່ໄດ້

ຢ່າງອື່ນ - ຂ້າພະເຈົ້າຈະໂທຣະສັບຫາໂຮງຮຽນເພື່ອອະທິບາຍ

### ເຫດຜົນຢ່າງອື່ນ:

ອຸບັດຕິເຫດ ແລະ ເຫດການທີ່ບໍ່ຄາດຄິດ ເຊັ່ນ ໄຟໄໝ້, ນ້ຳຖ້ວມ

ການເຂົ້າຮ່ວມໃນການສລອງພິເສດ ເຊັ່ນ ໄປຮ່ວມພິທີທາງສາສນາ

ການພັກຜ່ອນຂອງຄອບຄົວ

ຄວາມຫຍຸ້ງຍາກເລື້ອງຣົດຮັບສົ່ງໄປໂຮງຮຽນ

ຄວາມຊັກຊ້າທີ່ຫຼີກລ່ຽງບໍ່ໄດ້

ຢ່າງອື່ນ - ຂ້າພະເຈົ້າຈະໂທຣະສັບຫາໂຮງຮຽນເພື່ອອະທິບາຍ

## Possible reasons for absence

### Medical reason:

Flu

Stomach-ache

Diarrhoea

Cold

Headache/Migraine

Strong pain

Fever

Broken bone

Vomiting

Infectious illness eg chicken pox

Nose bleed

Asthma

Rash

Injury

Medical appointment

Dental appointment

Optometry appointment

Physiotherapy appointment

Specialist appointment

Other - I will telephone the school to explain

### Family reason:

Funeral

Moving residence

Arrival or departure of an immediate relative from overseas

Unavoidable involvement in a serious family incident

Other - I will telephone the school to explain

### Other reason:

Misadventure and unforeseen events eg fire, flood

Participation in special event, eg attendance at a religious ceremony

Family holiday

Transport difficulty

Unavoidable delay

Other - I will telephone the school to explain